ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 51 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 27 ທັນວາ 2016

ສຳນັກງານ ຄຄຊ
ເລກທີ 1283
ລົງວັນທີ 30.DEC.2016
ໂທລະສັບ 021 217770

# ລາຍງານການເຄື່ອນໄຫວປະຈຳອາທິດ ທີ 05-09/12/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,07% ທຽບເອີໂຣ ພາຍຫຼັງທະນາຄານກາງສະຫະພາບເອີຣົບ (ECB) ໄດ້ຕົກລົງຂະຫຍາຍເວລາໃນການຊື້ພັນທະບັດຕາມມາດຕະການຜ່ອນຄາຍທາງດ້ານປະລິມານເງິນ (QE) ອອກໄປອີກ 09 ເດືອນ. ໃນຂະນະດຽວກັນ, ດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກຂອງສະຫະລັດໃນເດືອນ 12/2016 ກໍປັບຕົວເພີ່ມຂຶ້ນເປັນ 98 ຈາກ 93,8 ໃນເດືອນ 11/2016.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 01/12/2016 | ອາທິດນີ້ 09/12/2016 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0630 | 1,0623 | 0,07% |
| ໂດລາ/ເຢນ | 114,13 | 114,41 | -0,24% |
| ໂດລາ/ບາດ | 35,660 | 35,620 | 0,11% |
| ໂດລາ/ເປໂຊ | 49,70 | 49,73 | -0,07% |
| ໂດລາ/ຣູເປັຍ | 13.540 | 13.325 | 1,61% |
| ໂດລາ/ໂດລາສິງກະໂປ | 1,4287 | 1,4229 | 0,41% |
| ໂດລາ/ຢວນ | 6,8929 | 6,9018 | -0,13% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ນ້ຳມັນລາຄາເພີ່ມຂຶ້ນ 3,35% ຈາກ 49,53 ໂດລາ/ບາເລວ ມາເປັນ 51,19 ໂດລາ/ບາເຣວ ພາຍຫຼັງຄາດການວ່າກຸ່ມຜູ້ຜະລິດນ້ຳມັນນອກກຸ່ມໂອເປັກ (OPEC) ຈະປັບຫຼຸດການຜະລິດນ້ຳມັນລົງໂດຍສະເພາະປະເທດລັດເຊຍຊຶ່ງເປັນຜູ້ຜະລິດນ້ຳມັນລາຍໃຫ່ຍ ຈະປັບຫຼຸດກຳລັງການຜະລິດນ້ຳມັນລົງປະມານ 300.000 ບາເຣວ/ວັນ ໃນຊ່ວງ 06 ເດືອນຕົ້ນປີ 2017. ສຳລັບລາຄາຄຳເພີ່ມຂຶ້ນ 0,22% ຈາກ 1.167,77 ໂດລາ/ອອນ ມາເປັນ 1.170,34 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າ 0,04% ສຳລັບອັດຕາ ທທກ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,31% ສຳລັບອັດຕາ ທທກ. ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າ 1,81% ສຳລັບອັດຕາ ທທກ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 3,02% ສຳລັບອັດຕາ ທທກ.

| ອັດຕາ | ອາທິດຜ່ານມາ 01/12/2016 | | | ອາທິດນີ້ 09/12/2016 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.299,19 | 8.353,81 | 8.324,84 | 8.310,09 | 8.354,67 | 8.327,98 | -0,13% | -0,01% | -0,04% | -1,91% | -1,76% | -1,81% |
| ບາດ | 233,93 | 235,51 | 234,97 | 234,66 | 236,35 | 235,70 | -0,31% | -0,36% | -0,31% | -2,98% | -3,12% | -3,02% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 0,73% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 2,28%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,61% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,30%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (05-08/12/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 38,65 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ ລ້ານໂດລາ 49,78 ແລະ ຂາຍໂດລາໄດ້ 11,13 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 835,71 ລ້ານບາດ (ໃນນີ້ ຊື້ບາດໄດ້ ລ້ານບາດ 199,12 ແລະ ຂາຍບາດໄດ້ 1.034,83 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ : ເງິນໂດລາເພີ່ມຂຶ້ນ 50,47% ແລະ ຫຼຸດລົງ 27,66% ສຳລັບເງິນບາດ.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 9,25 ລ້ານໂດລາ ແລະ ເງິນບາດ 33,50 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 3,10 ລ້ານໂດລາສະຫະລັດ ແລະ ເງິນບາດ 17,12 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ພາຍໃນອາທິດແມ່ນຂາຍເງິນສະກຸນເງິນໂດລາສະຫະລັດ 0,03 ລ້ານໂດລາ, ສ່ວນສະກຸນເງິນບາດແມ່ນບໍ່ມີການຊື້-ຂາຍ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

### ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 01/12/2016 | | ອາທິດທີ 05-08/12/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. <u>ການຊື້ເງິນຕາຕ່າງປະເທດ</u> | **48,43** | **278,02** | **49,78** | **199,12** | **2,79%** | **-28,38%** |
| - ທ/ຄທຸລະກິດລັດ | 10,97 | 68,48 | 5,58 | 5049 | -49,13% | -26,27% |
| - ທ/ຄທຸລະກິດອື່ນໆ | 37,46 | 209,54 | 44,20 | 148,.63 | 17,99% | -29,07% |
| 2. <u>ການຂາຍເງິນຕາຕ່າງປະເທດ</u> | **74,55** | **1,427,86** | **11,13** | **1.034,83** | **-85,07%** | **-27,53%** |
| - ທ/ຄທຸລະກິດລັດ | 12,55 | 133,09 | 9,92 | 96,82 | -20,96% | -27,25% |
| - ທ/ຄທຸລະກິດອື່ນໆ | 62,00 | 1.294,77 | 1,21 | 938,01 | -98,05% | -27,55% |
| <u>ຊື້-ຂາຍສຸດທິ ທທກ</u> | **-26,12** | **-1.149,84** | **38,65** | **-835,71** | **-247,97%** | **-27,32%** |
| - ຜົດດ່ຽງ ຊື້-ຂາຍ | -53,93% | -413,58% | 77,64% | -419,70% | -243,96% | 1,48% |
| - ມູນຄ່າການຊື້-ຂາຍ | **122,98** | **1.705,88** | **60,91** | **1.233,95** | **-50,47%** | **-27,66%** |
| 3. <u>ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ</u> | **-9,85** | **-54,05** | **-9,25** | **-33,50** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 9,85 | 54,05 | 9,25 | 33,50 | | |
| 4. <u>ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ</u> | **3,85** | **83,55** | **3,10** | **17,12** | | |
| 5. <u>ທຫລ ກັບ ພາກສ່ວນ ອື່ນໆ</u> | **0,15** | **0,63** | **0,03** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,15 | 0,63 | 0,04 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,01 | 0,00 | | |

2.4 <u>ສະພາບອັດຕາເງິນເຟີ້</u>

ອັດຕາເງິນເຟີ້ ໃນເດືອນ 12/2016 ຄາດວ່າຈະຢູ່ໃນລະດັບ 2,49% ເພີ່ມຂຶ້ນຈາກ 2,09% ໃນເດືອນ 11/2016.

2.5 <u>ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ</u>

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 78,96 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 1,8% ທຽບໃສ່ອາທິດຜ່ານມາ.

III. <u>ວຽກງານວິຊາສະເພາະ</u>

1. <u>ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ</u>

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 553 ສະບັບ ທຽບໃສ່ອາທິດຜ່ານມາຫຼຸດລົງ 435 ສະບັບ ເທົ່າກັບ 44,02% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 248,72 ຕື້ກີບ ຫຼຸດລົງ 110,95 ຕື້ກີບ ເທົ່າກັບ 30,84% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (05-08/12/2016) ມີຈຳນວນ 2.134 ຄັ້ງ, ໃນນີ້ມີສະກຸນເງິນກີບ 1.972 ຄັ້ງ, ໂດຍມີມູນຄ່າ 260,09 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 341,62 ຕື້ກີບ ເທົ່າກັບ 56,77%;

**ກະຊວງການເງິນ:** ມີການເຄື່ອນໄຫວ 162 ຄັ້ງ, ມີມູນຄ່າ 37,36 ຕື້ກີບ ເມື່ອທຽບກັບອາທິບຜ່ານມາ ຫຼຸດລົງ 146,23 ຕື້ກີບ ເທົ່າກັບ 79,65%.

2. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.014,05 ຈຸດ ຫຼຸດລົງ 1,40% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ ໝົດ 61.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 308,45 ລ້ານກີບ ຫຼຸດລົງ 2,78% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 27,67% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ (28/11/-01/12/2016) | ດັດຊະນີອາທິດທີ (05-09/12/2016) | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.028,48 | 1.014,05 | 1,40% | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 36.200 | 183.620.000 | 5.072 | 1.400 | 7.080.000 | 5.057 | -96,13 | -96,14 | -15 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 26.200 | 133.135.000 | 5.081 | 60.100 | 300.230.000 | 4.996 | 129,39 | 125,51 | -86 |
| ບໍລິສັດລາວເວີນ ມະຫາຊົນ | 0 | 0 | 6.100 | 100 | 590.000 | 5.900 | - | - | -200 |
| ບໍລິສັດປີໂຕລ້ຽມເທລດດິ້ງລາວ ມະຫາຊົນ | 200 | 500.000 | 2.500 | 100 | 250.000 | 2.500 | -50,00 | - 50,00 | - |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | 0 | 0 | - | 100 | 300.000 | 3.000 | - | - | - |
| ທັງໝົດ | 62.600 | 317.255.000 | 0 | 61.800 | 308,450,000 | | -1,28 | -2,78 | |

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການຈັດ ແລະ ເຂົ້າຮ່ວມກອງປະຊຸມສຳຄັນຕ່າງໆ: ❶ ກອງປະຊຸມປຶກສາຫາລືບັນດາເອກະສານທີ່ຈະນຳສະເໜີຜ່ານກອງປະຊຸມສະພາບໍລິຫານ ທຫລ ສະໄໝສາມັນ ປະຈຳປີ 2016, ❷ ກອງປະຊຸມຄະນະຮັບຜິດຊອບປັບປຸງຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ, ❸ ກອງປະຊຸມສຳມະນາແລກປ່ຽນທາງດ້ານວິຊາການ ແລະ ງານປິດໂຄງການແລກປ່ຽນທາງດ້ານວິຊາການລະຫວ່າງ ທະນາຄານແຫ່ງ ສປປ ລາວ ກັບ ທະນາຄານກາງເກົາຫຼີ ທີ່ ແຂວງຫຼວງພະບາງ, ❹ ກອງປະຊຸມສຳມະນາລະຫວ່າງ ທະນາຄານແຫ່ງ ສປປ ລາວ ກັບ ທະນາຄານແຫ່ງຊາດກຳປູເຈຍ ໃນຫົວຂໍ້ "ການບໍລິການບັນຊີລູກຄ້າ ທະນາຄານກາງ" ທີ່ນະຄອນຫຼວງວຽງຈັນ ແລະ ❺ ສຳເລັດການເຂົ້າຮ່ວມກອງປະຊຸມກ່ຽວກັບບົດຮຽນໃນການຈັດຕັ້ງປະຕິບັດລະບົບການລາຍງານບັນຊີການເງິນສາກົນ (IFRS) ທີ່ນະຄອນຫຼວງວຽງຈັນ;

- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຢູ່ຕ່າງປະເທດ: ສຳມະນາໃນຫົວຂໍ້ "ເຄື່ອຄ່າຍການພັດທະນາໂຄງລ່າງພື້ນຖານທາງການເງິນຂອງ APEC" ທີ່ປະເທດຟີລິປິນ, ກອງປະຊຸມໜ່ວຍງານຍ່ອຍຂະແໜງການບໍລິການດ້ານການເງິນ-ທະນາຄານ ພາຍໃຕ້ຂອບເຂດການຮ່ວມມືຮອບດ້ານໃນພາກພື້ນຄັ້ງທີ 7 ທີ່ປະເທດ ອິນໂດເນເຊຍ ແລະ ກອງປະຊຸມ AFCDM+3 ທີ່ປະເທດ ສປ. ຈີນ;

- ສຳເລັດການອອກໃບອະນຸຍາດການດຳເນີນທຸລະກິດຖາວອນໃຫ້ແກ່ ສກຈບ ທົ່ງຄຳ. ສກຈບ ຈະເລີນຊັບ, ສກຈບ ຍອດທົ່ງ, ບໍລິສັດເຊົ່າສິນເຊື່ອ ດີຈີບີ ແລະ ສຳເລັດການຖອນໃບອານຸຍາດດຳເນີທຸລະກິດຂອງ ສກຈບ ຈັນທະວົງ;

- ສຳເລັດການລົງຕິດຕາມ ແລະ ກວດກາ ທະນາຄານ ເອັສທີ ແລະ ທະນາຄານ ແຄນນາເດຍ;

- ໄດ້ຮັບລາຍງານທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດ 08 ສະບັບ, ຮອດປະຈຸປັນ STR ລວມທັງໝົດມີ 492 ສະບັບ.

4. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ກະກຽມເງື່ອນໄຂຕ່າງໆໃຫ້ແກ່ກອງປະຊຸມຕ່າງໆເປັນຕົ້ນ: ❶ ກອງປະຊຸມສ່ອງແສງສາຍພັກ ແລະ ກອງປະຊຸມສ່ອງແສງສາຍລັດ ປະຈຳເດືອນ ພະຈິກ 2016, ❷ ກອງປະຊຸມຮ່ວມກັບກະຊວງການເງິນ ໃນຫົວຂໍ້ "ການກູ້ຢືມໂດຍນຳໃຊ້ອະສັງຫາລິມະສັບຄ້ຳປະກັນ", ❸ ກອງປະຊຸມ ຄຄຊ ຄັ້ງທີ III ປະຈຳປີ 2016, ❹ ກອງປະຊຸມລັດຖະບານເປີດກວ້າງປະຈຳປີ 2015-2016 ແລະ ແຜນວຽກຈຸດສຸມປີ 2017 ທີ່ (ຫ້ອງວ່າການ ສນຍ) ❺ ກອງປະຊຸມສຳມະນາຮ່ວມກັບ ຄຄຊ ສສ.ຫວຽດນາມ ແລະ ❻ ເຂົ້າຮ່ວມສະເໜີປະກອບຄຳເຫັນກ່ຽວກັບແຜນເງິນຕາປີ 2017 ໃນກອງປະຊຸມປະຈຳວຽກງານແຜນການ-ການເງິນ;

- ກະກຽມຄວາມພ້ອມຮັບແຂກເຂົ້າພົບ ແລະ ຢ້ຽມຂ່ຳນັບ ຜູ້ຕາງໜ້າ (IMF) ກ່ຽວກັບການຈັດສຳມະນາວຽກງານຄຸ້ມຄອງເສດຖະກິດມະຫາພາກໃຫ້ແກ່ການນຳລະດັບສູງ, ຮັບການເຂົ້າພົບຂອງ ທ່ານ ນ. Irina ຫົວໜ້າກົມອາຊີປາຊີຟິກ WB ແລະ ຕ້ອນຮັບ ຄະນະສະຫະພັນບັນຊີຂອງ ອາຊຽນ ກ່ຽວກັບໂຄງການຈັດຕັ້ງປະຕິບັດ IFRS;

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ;

- ກະກຽມຈັດກອງປະຊຸມເປີດກວ້າງ ເພື່ອລະດົມຄຳເຫັນໃສ່ (ຮ່າງ) ຂໍ້ຕົກລົງວ່າດ້ວຍການຊື້-ຂາຍໂດຍບໍ່ວາງເງິນມັດຈຳລ່ວງໜ້າ;

- ກະກຽມເປີດກອງປະຊຸມສະພາບໍລິຫານ ພາຍຫຼັງທີ່ໄດ້ຮັບດຳລັດຂອງທ່ານ ນາຍົກລັດຖະມົນຕີ ກ່ຽວກັບການແຕ່ງຕັ້ງ ສະພາບໍລິຫານ ທະນາຄານແຫ່ງ ສປປ ລາວ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ

ເພັດສະຖາພອນ ແກ້ວວົງວິຈິດ